**DAK LAK RUBBER COMPANY.,LTD (DAKLAORUCO)**
**Address: Thaluong Village - Pakse District - Champasak Province - Lao PDR**
**Tel: 00856 31 21 25 70; Fax: 00856 31 25 29 82**
**Email: daklaoruco.lao@gmail.com Website: http://www.daklaoruco.com**

ເລກທີ: 01/ລງ- FSC *ປາກເຊ, ວັນທີ 20 ເດືອນ 01 ປີ 2025*

# ບົດລາຍງານ

## ວ່າດ້ວຍການຈັດຕັ້ງປະຕິບັດວຽກງານການຕ້ານການສໍ້ລາດບັງຫລວງ ປີ 2024

- ອີງຕາມກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫລວງ ສະບັບເລກທີ 27/ສພຊ (ສະບັບປັບປຸງ) ລົງວັນທີ 18/12/2012 ອອກໂດຍສະພາແຫ່ງຊາດ ຂອງ ສປປ ລາວ;

- ອີງຕາມກົດລະບຽບສະບັບເລກທີ 10/ລບ- ບສ ລົງວັນທີ 27/06/2023 ຂອງຜູ້ອໍານວຍການບໍລິສັດວ່າດ້ວຍ ການຕ້ານການສໍ້ລາດບັງຫລວງ;

- ອີງຕາມບົດບາດແລະໜ້າທີ່ ຂອງຄະນະ FSC ຂອງບໍລິສັດ;

- ອີງຕາມສະພາບຕົວຈິງຂອງ ບໍລິສັດ.

ຄະນະ FSC ຂອງບໍລິສັດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານການຕ້ານການສໍ້ລາດບັງຫລວງ ປີ 2024 ດັ່ງຕໍ່ໄປນີ້:

**1. ສະພາບການຈັດຕັ້ງປະຕິບັດວຽກງານ ສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ:**

- ກໍານົດວຽກງານ ການຕ້ານການສໍ້ລາດບັງຫລວງ ເປັນວຽກງານທີ່ສໍາຄັນ, ເປັນປະຈໍາ ແລະ ຍາວນານ, ບໍລິສັດໄດ້ອອກລະບຽບ ການຕ້ານການສໍ້ລາດບັງຫລວງສະບັບເລກທີ 10/ ລບ- ບສ ລົງວັນທີ 27/6/2023.

- ໃນປີ 2024, ບໍລິສັດໄດ້ນໍາເອົາເນື້ອໃນ ການຕ້ານການສໍ້ລາດບັງຫລວງ ເຂົ້າໃນການເຄື່ອນໄຫວຂອງພັກ ແລະ ຍັງໄດ້ເຜີຍແຜ່, ໂຄສະນາໃຫ້ພະນັກງານກໍາມະກອນທົ່ວບໍລິສັດ; ພ້ອມກັນນັ້ນກໍມອບໝາຍໃຫ້ບັນດາຫ້ອງການ, ໜ່ວຍງານໃນບໍລິສັດປະຕິບັດວຽກງານກວດກາ, ຕິດຕາມວຽກງານ ການຕ້ານການສໍ້ລາດບັງຫລວງ. ໂດຍຜ່ານວຽກງານໂຄສະນາ, ຄວາມຮັບຮູ້ຂອງພະນັກງານກໍາມະກອນໄດ້ມີການປ່ຽນແປງຢ່າງເຫັນໄດ້ແຈ້ງ.

- ເພີ່ມທະວີຄວາມຮັບຜິດຊອບໃນການຊີ້ນໍາ-ນໍາພາວຽກງານ ການຕ້ານການສໍ້ລາດບັງຫລວງ, ສ້າງການປ່ຽນແປງທັງຄວາມຮັບຮູ້ ແລະ ການປະຕິບັດໃຫ້ແກ່ພະນັກງານກໍາມະກອນທົ່ວບໍລິສັດ; ສຸມໃສ່ປະຕິບັດເປົ້າໝາຍການຕ້ານການສໍ້ລາດບັງຫລວງ, ປະກອບສ່ວນສ້າງຕັ້ງບໍລິສັດຢ່າງມີປະສິດທິຜົນ ແລະ ຍືນຍົງ.

**1. ມາດຕະການ ສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ:**

- ປະຕິບັດດ້ວຍຄວາມໂປ່ງໃສ, ປະຊາທິປະໄຕໃນການຮັບສະໝັກ, ຈັດແບ່ງ, ວາງແຜນ, ຝຶກອົບຮົມ, ຂຶ້ນຕໍາແໜ່ງ, ຍ້ອງຍໍໃຫ້ລາງວັນ ແລະ ໃສ່ລະບຽບວິໄນພະນັກງານກໍາມະກອນ.

- ຊີ້ນໍາບັນດາຫ້ອງການເພີ່ມການ ກວດກາ, ເຫັນບັນດາກົນໄກ, ນະໂຍບາຍ ແລະ ຂັ້ນຕອນທີ່ສັບສົນ ຫຼືມີຊ່ອງຫວ່າງທີ່ສາມາດ ເຮັດໃຫ້ເກີດການສໍ້ລາດບັງຫຼວງ, ປະກົດການຫຍໍ້ທໍ້ ເພື່ອເປັນພື້ນຖານສະເໜີຕໍ່ຄະນະນໍາບໍລິສັດ.

- ປະຕິບັດຕາມຫຼັກການຂອງບໍລິສັດ ແລະ ປະຕິບັດໜ້າທີ່, ວຽກງານ.

- ປະຕິບັດຕາມລະບົບ, ລາຄາ, ມາດຕະຖານ ເພື່ອເປັນບ່ອນອີງໃນການເຄື່ອນໄຫວການຜະລິດ,ທຸລະກິດ ຮັບປະກັນການປະຢັດ, ຕ້ານການຟູມເຟືອຍ.

**1. ຜົນຂອງການຈັດຕັ້ງປະຕິບັດ:**

- ແຕ່ເດືອນ 06/2024 ຫາວັນທີ 31/12/2024, ບໍລິສັດຍັງບໍ່ທັນໄດ້ຮັບບົດລາຍງານ, ໜັງສືຮ້ອງຮຽນກ່ຽວກັບການສໍ້ລາດບັງຫຼວງ, ປະກົດການຫຍໍ້ທໍ້ໃດໆ.

- ຄະນະນຳບໍລິສັດໄດ້ຊີ້ນຳວຽກງານການເຜີຍແຜ່ເອກະສານນິຕິກຳກ່ຽວກັບການຕ້ານການສໍ້ລາດບັງຫຼວງ.

- ກວດກາການຈັດຕັ້ງປະຕິບັດກົດລະບຽບການຕ້ານການສໍ້ລາດບັງຫລວງ ຂອງບໍລິສັດ (ສະບັບເລກທີ 10/ລບ- ບສ ລົງວັນທີ 27/06/2023) ຢູ່ບັນດາຫ້ອງການ ແລະ ໜ່ວຍງານທີ່ສັງກັດບໍລິສັດ.

**2. ແຜນການ ປີ 2025.**

- ຈັດຕັ້ງໂຄສະນາເຜີຍແຜ່ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດກ່ຽວກັບການຕ້ານການສໍ້ລາດບັງຫລວງ, ຕ້ານການຟູມເຟືອຍ.

- ສືບຕໍ່ຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍ ການຕ້ານການສໍ້ລາດບັງຫລວງໃນແຕ່ລະປີ.

- ບໍລິສັດ ໃຫ້ຄວາມສຳຄັນກັບການຕິດຕາມກວດກາ ແລະກວດພົບການລະເມີດພາຍໃນດ້ວຍຕົນເອງ. ມີການລົງໂທດສຳລັບກໍລະນີທີ່ລະເມີດ.

ຂ້າງເທິງແມ່ນເນື້ອໃນຂອງບົດລາຍງານການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍການຕ້ານການສໍ້ລາດບັງຫລວງໃນປີ 2024.

**ຄະນະ FSC ບໍລິສັດ**

ກະຊວງ ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາສັກ

**ດັ້ງ ດິ່ງ ຟຸ່ງ**

**Dang Dinh Phung**

*ບ່ອນນຳສົ່ງ:*

- ຄະນະ ອນກ ບສ;
- ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ຄະນະ FSC ບສ;
- Website ບສ;
- ສຳເນົາຂາອອກ-ຂາເຂົ້າ.